ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ສະຖາບັນໂຍທາທິການ ແລະ ຂົນສົ່ງ

ເລກທີ ...655........./ສຍຂ
ນະຄອນຫຼວງວຽງຈັນ, ວັນທີ 06 ມີນາ 2023

# ປະກາດ ຮັບສະໝັກພະນັກງານ

**(ໂຄງການ SEARECC, ໂຄງການເລກທີ P176088; ເງິນກູ້ຢືມເລກທີ 7102-LA)**

ລັດຖະບານແຫ່ງ ສປປ ລາວ ໄດ້ຮັບທຶນກູ້ຢືມຈາກກຸ່ມທະນາຄານໂລກ ເພື່ອນຳໃຊ້ເຂົ້າໃນ ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ເພື່ອການເຊື່ອມຈອດ-ເຊື່ອມໂຍງ (SEARECC) ໃນມູນຄ່າລວມປະມານ 212,2 ລ້ານ ໂດລາສະຫະລັດ ມີໄລຍະເວລາການຈັດຕັ້ງປະຕິບັດໂຄງການ 06 ປີ (2022 - 2028), ມີພາກສ່ວນຈັດຕັ້ງປະຕິບັດໂຄງການຈາກ 07 ກະຊວງ: ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ, ກະຊວງສາທາລະນະສຸກ, ກະຊວງການເງິນ, ກະຊວງປ້ອງກັນຄວາມສະຫງົບ ແລະ 05 ແຂວງເປົ້າໝາຍຂອງໂຄງການຄື: ແຂວງອຸດົມໄຊ, ແຂວງຜົ້ງສາລີ, ແຂວງໄຊຍະບູລີ, ແຂວງຫຼວງນໍ້າທາ ແລະ ແຂວງຫຼວງພະບາງ.

ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການແມ່ນ ເພື່ອປັບປຸງການເຊື່ອມຈອດ-ເຊື່ອມໂຍງ ດ້ານການຄ້າ ແລະ ການຂົນສົ່ງ ພາຍໃນ ແລະ ພາກພື້ນ ເພື່ອສ້າງເງື່ອນໄຂໃຫ້ ສປປ ລາວ ສາມາດຂຸດຄົ້ນທ່າແຮງທາງດ້ານເສດຖະກິດ, ກະສິກຳ ການຄ້າ ແລະ ທ່ອງທ່ຽວ ຕາມແລວທາງເສດຖະກິດແບບຍືນຍົງ, ເຊິ່ງກຳນົດມີ 04 ໜ້າວຽກຫຼັກຄື:

<u>ໜ້າວຽກທີ 01 :</u> ເຊື່ອມຈອດ-ເຊື່ອມໂຍງພາກພື້ນ - ປັບປຸງເສັ້ນທາງຫລວງແຫ່ງຊາດໝາຍເລກ 02 ເຊິ່ງເປັນສ່ວນໜຶ່ງຂອງ AH 13, ທາງຫລວງທ້ອງຖິ່ນເຂົ້າຫາເຂດການຜະລິດຢູ່ 05 ແຂວງ (ແຂວງອຸດົມໄຊ, ແຂວງຜົ້ງສາລີ, ແຂວງໄຊຍະບູລີ, ແຂວງຫຼວງນໍ້າທາ ແລະ ແຂວງຫຼວງພະບາງ) ແລະ ດ່ານຊາຍແດນສາກົນປາງຮົກ ຕິດກັບ ສສ ຫວຽດນາມ ແລະ ດ່ານຊາຍແດນສາກົນນໍ້າເງິນ ຕິດກັບລາດຊະອານາຈັກໄທ.

<u>ໜ້າວຽກທີ 02 :</u> ພັດທະນາ ແລະ ຍົກລະດັບຂະແໜງບໍລິການໂລຊິດສະຕິກ ແລະ ການຄຸ້ມຄອງຂະບວນການຂ້າມແດນ - ພັດທະນາທ່າບົກ. ໂດຍສະເພາະ ແຂວງອຸດົມໄຊ, ແຂວງຫລວງພະບາງ ແລະ ແຂວງໄຊຍະບູລີ ເພື່ອສ້າງເງື່ອນໄຂດຶງດູດການລົງທຶນຂອງເອກະຊົນໃນການພັດທະນາທ່າບົກດັ່ງກ່າວ; ປັບປຸງບັນດານະໂຍບາຍ ແລະ ລະບຽບການທີ່ຕິດພັນກັບດ່ານຊາຍແດນໃຫ້ເປັນທັນສະໄໝ ແລະ ຍົກລະດັບຂີດຄວາມສາມາດຂອງແຂວງ ແລະ ປັບປຸງລະບຽບການເພື່ອຊຸກຍູ້ການແຂ່ງຂັນໃນການບໍລິການໂລຊິດສະຕິກ.

<u>ໜ້າວຽກທີ 03 :</u> ສ້າງຄວາມເຂັ້ມແຂງໃຫ້ກັບອົງກອນ ຫລື ກົງຈັກ - ສ້າງຄວາມເຂັ້ມແຂງແກ່ ຂະແໜງກະສິກຳ ໃນການປັບປຸງມາດຕະຖານການກວດຢັ້ງຢືນຄຸນນະພາບ ແລະ ຄວາມປອດໄພຂອງພືດ ແລະ ສັດ (SPS), ປັບປຸງຂີດ

ຄວາມສາມາດ ເພື່ອຊຸກຍູ້ການຄ້າ, ສິນຄ້າກະສິກຳ. ສ້າງຄວາມເຂັ້ມແຂງແກ່ຂະແໜງໂຍທາທິການ ແລະ ຂົນສົ່ງ ຊຸກຍູ້ສົ່ງເສີມນິຕິກຳ ແລະ ນະໂຍບາຍຂົນສົ່ງຫລາຍຮູບແບບ ແລະ ຈັດຕັ້ງປະຕິບັດບັນດາສັນຍາຂົນສົ່ງຂ້າມແດນ, ການວາງແຜນ, ການປະສານງານ, ຄວາມປອດໄພຕາມທ້ອງຖະໜົນ, ການມີສ່ວນຮ່ວມຂອງແມ່ຍິງເຂົ້າໃນການພັດທະນາຂອງຂະແໜງ ການ ແລະ ການຮັບປະກັນວຽກສິ່ງແວດລ້ອມ-ສັງຄົມ ຂອງຂັ້ນສູນກາງ ແລະ ທ້ອງຖິ່ນ.

<u>ໜ້າວຽກທີ 04 :</u> ວຽກຄຸ້ມຄອງບໍລິຫານໂຄງການລວມມີ ການປະສານງານໂຄງການ, ການຈັດຊື້-ຈັດຈ້າງ, ການຄຸ້ມຄອງການເງິນ, ການຄຸ້ມຄອງວຽກງານສິ່ງແວດລ້ອມ ແລະ ສັງຄົມ, ການຕິດຕາມ ແລະ ປະເມີນຜົນ, ການກວດສອບການເງິນ ແລະ ເຕັກນິກ.

ໂຄງການມີຄວາມຕ້ອງການພະນັກງານທີ່ມີຄຸນວຸດທິ, ມີຄວາມມຸ່ງໝັ້ນ ດຸໝັ່ນ ແລະ ຫ້າວຫັນ ເພື່ອເຂົ້າມາຮ່ວມເຮັດວຽກກັບທີມງານ, ເຊິ່ງມີຕຳແໜ່ງດັ່ງລຸ່ມນີ້:

- ພະນັກງານຊ່ວຍວຽກສິ່ງແວດລ້ອມ ແລະ ສັງຄົມ: 03 ຕຳແໜ່ງ, ປະຈຳຢູ່: ສະຖາບັນໂຍທາທິການ ແລະ ຂົນສົ່ງ

ການຄັດເລືອກແມ່ນອີງໃສ່ລະບຽບຫຼັກການຂອງທະນາຄານໂລກ, ຜູ້ທີ່ໄດ້ຮັບການຄັດເລືອກຈະຕ້ອງເລີ່ມດຳເນີນວຽກງານໃນໄວໆນີ້. ທ່ານທີ່ສົນໃຈໃຫ້ສົ່ງຈົດໝາຍສະແດງຄວາມສົນໃຈພ້ອມກັບຊີວະປະຫວັດ (ເປັນພາສາລາວ ຫລື ອັງກິດ) ແລະ ລາຍຊື່ພ້ອມດ້ວຍທີ່ຢູ່ຜູ້ຢັ້ງຢືນ 03 ທ່ານ ມາຍັງທີ່ຢູ່ຂ້າງລຸ່ມນີ້, ຊ້າສຸດບໍ່ໃຫ້ກາຍວັນທີ **16** ກໍລະກົດ **2023**, ທ່ານສາມາດຊອກຫາຂໍ້ມູນເພີ່ມຕື່ມໄດ້ຕາມທີ່ຢູ່ຂ້າງລຸ່ມໃນວັນລັດຖະການແຕ່ 9:00 - 16:00, ຍົກເວັ້ນວັນພັກ ຫລື ຕາມເວັບລິ້ງ : <u>http://ppmd.mof.gov.la/opportunities/con.</u>

ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ເພື່ອການເຊື່ອມຈອດ-ເຊື່ອມໂຍງ
ໂທ / ແຟັກ : +856 20 22224746, +85620 29785358, +856 20 59585522.
ສົ່ງເຖິງ E-mail: souksamaymmnv@gmail.com
ແລະ CC to: siriphone.inthirath@gmail.com, va.vanidal@gmail.com, souksamai12@yahoo.com, maxmahaxay11@hotmail.com and thanongsakd@gmail.com

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມສະໝັກໃນຄັ້ງນີ້ດ້ວຍ.

ຫົວໜ້າສະຖາບັນໂຍທາທິການ ແລະ ຂົນສົ່ງ

ສີລິພອນ ອິນທິລາດ